**ບົດຖະແຫຼງຂ່າວ**

**ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ**

**ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19**

**ປະຈຳວັນພຸດ ວັນທີ 22 ກັນຍາ ປີ 2021**

ສະບາຍດີ ບັນດາທ່ານທີ່ກຳລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດຖະແຫຼງຂ່າວ ຂອງຄະນະສະເພາະກິດ **ປະຈຳວັນພຸດ ວັນທີ 22 ກັນຍາ ປີ 2021**.

ຂ້າພະເຈົ້າ ດຣ. ສີສະຫວາດ ສຸດທານີລະໄຊ ຮອງຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ ຈະຖະແຫຼງຂ່າວ ກ່ຽວກັບ ສະພາບໂຄວິດ-19 ຢູ່ ສປປ ລາວ, ໃນທົ່ວໂລກ ແລະ ບາງຂໍ້ແນະນຳເພີ່ມເຕີມ.

**ຕໍ່ໄປ ຂ້າພະເຈົ້າ ຂໍລາຍງານ:**

❖ **ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ, ມາຮອດວັນທີ 21 ກັນຍາ 2021:**

ໄດ້ກວດວິເຄາະທັງໝົດ **5,913** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ ທັງໝົດ **222** ຄົນ:

- **ກໍລະນີນໍາເຂົ້າ ມີ 12 ຄົນ** ຈາກ ແຂວງ ສະຫວັນນະເຂດ 5 ຄົນ, ຈໍາປາສັກ 2 ຄົນ, ຄໍາມ່ວນ 2 ຄົນ, ຫຼວງພະບາງ 2 ຄົນ ແລະ ສາລະວັນ 1 ຄົນ ເຊິ່ງກວດພົບຈາກແຮງງານລາວ ຫຼື ຜູ້ທີ່ເດີນທາງມາຈາກຕ່າງປະເທດ ເຂົ້າມາຕາມຈຸດຜ່ານແດນສາກົນ.
- **ສໍາລັບ ການຕິດເຊື້ອໃນຊຸມຊົນ ມີ 210 ຄົນ ລາຍລະອຽດ ດັ່ງຕໍ່ໄປນີ້:**

• **ນະຄອນຫຼວງ 75 ຄົນ:**

1. ເກັບຕົວຢ່າງ ຢູ່ເມືອງສີໂຄດຕະບອງ ມີ 33 ກໍລະນີ

- ເມືອງສີໂຄດຕະບອງ ມີ 16 ກໍລະນີ (ບ້ານຊໍາເກດ 3; ບ້ານໜອງແຕ່ງເໜືອ 3; ບ້ານໂນນແກ້ວ 2; ບ້ານໂພນສະຫວາດເໜືອ 2; ບ້ານຈັນສະຫວ່າງ 1; ທົ່ງປົ່ງ 1; ໜອງໜ່ຽວ 1; ໜອງແຕ່ງໃຕ້ 1; ບ້ານໂນນຂີ້ເຫລັກ 1 ແລະ ບ້ານໂພນສີມບູນ 1;
- ເມືອງຈັນທະບູລີ ມີ 07 ກໍລະນີ (ບ້ານດອນແດງ ມີ 05 ກໍລະນີ; ບ້ານສີຫອມ ແລະ ບ້ານຫ້ວຍຫົງ ມີບ້ານລະ 01 ກໍລະນີ)
- ເມືອງນາຊາຍທອງ ມີ 05 ກໍລະນີ (ບ້ານໜອງອຸດົມ 2; ບ້ານນາລຽນ 2 ແລະ ບ້ານຜາແຫ້ງ 1)

- ເມືອງໄຊທານີ ມີ 03 ກໍລະນີ (ບ້ານໜອງພະຍາ 02 ກໍລະນີ ແລະ ບ້ານສີວິໄລ 01 ກໍລະນີ)

- ເມືອງໄຊເສດຖາ ມີ 02 ກໍລະນີ (ບ້ານໂຊກນ້ອຍ ແລະ ບ້ານຈອມມະນີໃຕ້ ມີບ້ານລະ 01 ກໍລະນີ

2. ເກັບຕົວຢ່າງ ຢູ່ເມືອງໄຊທານີ ມີ 12 ກໍລະນີ

- ເມືອງໄຊທານີ ມີ 11 ກໍລະນີ (ບ້ານສາຍນໍ້າເງິນ ມີ 05 ກໍລະນີ; ບ້ານທ່າງ່ອນ ແລະ ບ້ານໂນນບໍ່ແກ້ວ ມີບ້ານລະ 02 ກໍລະນີ; ບ້ານາຫົມ ແລະ ບ້ານໂນນສະອາດ ມີບ້ານລະ 01 ກໍລະນີ ບ້ານອີ່ໄລເໜືອ, ເມືອງນາຊາຍທອງ ມີ 01 ກໍລະນີ

3. ເກັບຕົວຢ່າງ ຢູ່ໂຮງໝໍເສດຖາທິລາດ ມີ 11 ກໍລະນີ

- ເມືອງໄຊເສດຖາ ມີ 04 ກໍລະນີ (ບ້ານດົງຄໍາຊ້າງ ມີ 02 ກໍລະນີ, ບ້ານໂພນທອງ ແລະ ບ້ານເມືອງນ້ອຍ ມີບ້ານລະ 01 ກໍລະນີ)
- ມີ 02 ກໍລະນີ ຈາກບ້ານພະຂາວ ແລະ ບ້ານພູຄໍາ ມີບ້ານລະ 01 ກໍລະນີ (ອາຊີບຄ້າຂາຍ ແລະ ເດັກ)
- ບ້ານໜອງທາເໜືອ, ເມືອງຈັນທະບູລີ ມີ 01 ກໍລະນີ (ອາຊີບພະນັກງານເອກະຊົນ)
- ບ້ານດອນນົກຂຸ້ມ, ເມືອງສີສັດຕະນາກ ມີ 01 ກໍລະນີ (ອາຊີບພະນັກງານ)
- ບ້ານໂພນສະຫວາດ, ເມືອງສີໂຄດຕະບອງ ມີ 01 ກໍລະນີ (ອາຊີບພະນັກງານ)

4. ເກັບຕົວຢ່າງ ຢູ່ບຶງຂະຫຍອງ ມີ 11 ກໍລະນີ

- ເມືອງຈັນທະບູລີ ມີ 06 ກໍລະນີ (ບ້ານໜອງທາເໜືອ ມີ 05 ກໍລະນີ ແລະ ບ້ານຫ້ວຍຫົງ ມີ 01 ກໍລະນີ)

- ເມືອງໄຊທານີ 02 ກໍລະນີ (ບ້ານຫ້ວຍເຕີຍ ເຮັດວຽກຢູ່ໂຮງງານອານປີລາວ ແລະ ບ້ານໜອງພະຍາ ເປັນພະນັກງານບໍລິສັດດີເຄ)

- ເມືອງຫາດຊາຍຟອງ ມີ 02 ກໍລະນີ (ບ້ານດົງຄໍາຊ້າງ ອາຊີບເປັນພະນັກງານ ຢູ່ສະໜາມມ້າກົມຄຸ້ມຄອງສໍາມະໂນຄົວ ແລະ ບ້ານດອນດູ່ ເຮັດວຽກຢູ່ໂຮງງານອານປີລາວ)

- ບ້ານສີບຸນທົ່ງ, ເມືອງສີໂຄດຕະບອງ ມີ 01 ກໍລະນີ

- ບ້ານລຽນ, ເມືອງນາຊາຍທອງ ມີ 01 ກໍລະນີ

5. ເກັບຕົວຢ່າງ ຢູ່ໂຮງໝໍ 103 ມີ 03 ກໍລະນີ (ມີ 02 ກໍລະນີ ຈາກບ້ານທ່າສະຫວ່າງ ແລະ ບ້ານໂຄກສີວິໄລ,  ເມືອງໄຊທານີ ມີບ້ານລະ 01 ກໍລະນີ; ບ້ານບໍ່ນາງິ້ວ, ເມືອງຈັນທະບູລີ ມີ 01 ກໍລະນີ) ແລະ ໄດ້ສໍາຜັດກັບກໍລະນີຕິດເຊື້ອກ່ອນໜ້າ.

6. ເກັບຕົວຢ່າງຢູ່ສຸກເສີນ ຢູ່ໂຮງໝໍມະໂຫສົດ ມີ 02 ກໍລະນີ (ບ້ານສີເກີດ, ເມືອງນາຊາຍທອງ ແລະ ບ້ານຍາພະ, ເມືອງສີໂຄດຕະບອງ ມີເມືອງລະ 01 ກໍລະນີ)

7. ບ້ານໂພນສະຫວັນ, ເມືອງສີສັດຕະນາກ, ເພດຍິງ, ອາຍຸ 03 ປີ

8. ໂຮງງານອານປີລາວ ມີ 01 ກໍລະນີ (ບ້ານຫ້ວຍຫົງ, ເມືອງຈັນທະບູລີ)

9. ລ້ານຊ້າງ ມີ 01 ກໍລະນີ (ບ້ານໜອງແຈງ, ເມືອງສີໂຄດຕະບອງ)

2. ສະຫວັນນະເຂດ ຈາກ ຊຸມຊົນ ມີ 4 ຄົນ ຄື:

- 03 ຄົນ, ຈາກບ້ານ ສະໜາມໄຊ, ນະຄອນໄກສອນ ມີ 03 ຄົນ ເປັນຄົນໃນຄອບຄົວດຽວກັນ.

- ບ້ານທ່າແຮ່, ນະຄອນໄກສອນ ມີ 01 ຄົນ ເປັນເພດຍິງ, ອາຍຸ 22 ປີ, ນັກສຶກສາແພດ ທີ່ໄດ້ສໍາຜັດໃກ້ຊິດກັບກໍລະນີຕິດເຊື້ອທີ່ເປັນນັກສຶກສາແພດນໍາກັນ ຢູ່ຫໍພັກນໍາກັນ ທີ່ໄດ້ລາຍງານ ໃນວັນທີ 20 ກັນຍາ 2021.

3. ຈໍາປາສັກ ຊຸມຊຸນ 23 ຄົນ ຊຶ່ງມາຈາກ:

ນະຄອນປາກເຊ 21 ຄົນ (ຈາກ ຄົນເຈັບ **ILI/SARI** 02ຄົນ)

ເມືອງບາຈຽງ 01 ຄົນ

ເມືອງ ຊະນະສົມບູນ 01 ຄົນ

4. ຄຳມ່ວນ: 37 ຄົນ; ນຳເຂົ້າ 2 (ໃໝ່) ແລະ  ກໍລະນີຊຸມຊົນ 35 ຄົນ ຊຶ່ງມາຈາກ:

- ທ່າແຂກ  31 ຕົວຢ່າງ

- ໄຊບົວທອງ  3 ຕົວຢ່າງ

- ເຊບັ້ງໄຟ  3 ຕົວຢ່າງ

6. ບໍ່ແກ້ວ : 02 ຄົນ ຊຸມຊົນ;  (ລາວ 01 ຄົນ; ຈີນ 01 ຄົນ)  ຈາກເມືອງຕົ້ນເຜີ້ງ

7. ແຂວງ ຊຽງຂວາງ:  08 ຄົນ;  ຈາກຊຸມຊົນ ເປັນກໍລະນີສຳຜັດຈາກຜູ້ຕິດເຊື້ອທີ່ລາຍງານກ່ອນໜ້ານີ້ (ມີຄອບຄົວ ແລະ ຜູ້ທີ່ມາຮ່ວມງານສົບ ຢູ່ເມືອງຜາໄຊ)

- 01 ຄົນ ຈາກ ບ້ານ ຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ ແຕ່ໄດ້ເດີນທາງ ໄປສົ່ງສະການພໍ່ເຖົ້າ ຢູ່ບ້ານຖ້ຳຜຸກທຳສົມ ໃນວັນທີ 17 ກັນຍາ 2021

- ເມືອງຜາໄຊ: ບ້ານຖ້ຳຜຸກທຳສົມມີ 04 ຄົນ, ບ້ານສ່ອມ 1 ຄົນ, ບ້ານຊຽງດີ 1 ຄົນ

- ເມືອງແປກ: ບ້ານໂພນສະຫວັນໃຕ້ ມີ 01 ຄົນ

8. ຫຼວງພະບາງ: ຊຸມຊົນ 14 ຄົນ ມາຈາກ: ເມືອງງອຍ ມີ 10 ຄົນ, ຊຶ່ງ ເປັນ ກຸ່ມສ່ຽງທີ່ໄດ້ ຢູ່ບ້ານ ແລະ ມີປະຫວັດສຳຜັດໃກ້ຊິດກັບກໍລະນີຕິດເຊື້ອທີ່ໄດ້ລາຍງານໃນວັນທີ 21 ກັນຍາ 2021.

ບ້ານໜອງຂຽວ 08 ກໍລະນີ (ອາຊີບ: ເຮັດສວນ ມີ 03 ກໍລະນີ; ພະນັກງານກະສິກຳເມືອງ ແລະ ພະນັກງານຫ້ອງການຊາວໜຸ່ມເມືອງ ມີບ່ອນລະ 01 ກໍລະນີ; ອາຊີບ: ເດັກ, ນັກຮຽນ, ກຳມະກອນ, ຄ້າຂາຍປາ ແລະ ຫຍິບເຄື່ອງ ມີບ່ອນລະ 01 ກໍລະນີ)

ບ້ານສິບຮຸນ ມີ 02 ກໍລະນີ (ອາຊີບ: ເຮັດສວນ ແລະ ກຳມະກອນ ມີບ່ອນລະ 01 ກໍລະນີ)

ບ້ານໂພນໄຊ, ເມືອງນານ ມີ 04 ກໍລະນີ ໄດ້ກັກໂຕ ຢູ່ສູນເມືອງນານ ແລະ ມີປະຫວັດສໍາຜັດໃກ້ຊິດກັບ

ຕິດເຊື້ອທີ່ໄດ້ລາຍງານໃນວັນທີ 12 ກັນຍາ 2021.

9. ແຂວງວຽງຈັນ: 44 ຄົນ (ຊຸມຊົນ); ໃນນີ້ ມີອາການສະແດງອອກ 24 ຄົນ ແລະ ບໍ່ມີອາການສະແດງອອກ 21 ຄົນ, ຊຶ່ງທັງໝົດມີປະຫວັດສໍາຜັດກັບ ເຈົ້າໜ້າທີ່ ຕໍາຫລວດ (ເພດຊາ ອາຍຸ 48 ປີ) ພະແນກສັນຕິບານ ກະຊວງປ້ອງກັນຄວາມສະຫງົບ; ທີ່ມາງານເຮືອນດີຂອງຜູ້ເປັນແມ່ ໃນຊ່ວງວັນທີ 13-16 ກັນຍາ 2021

- ບ້ານໂພນທໍ່ ມີ 39 ກໍລະນີ
- ມີ 04 ກໍລະນີ ຈາກບ້ານໂພນແກ້ວ ແລະ ບ້ານສ້າງໃຫ່ຍ ມີບ້ານລະ 02 ກໍລະນີ

- ບ້ານນາກໍ່ ມີ 01 ກໍລະນີ

10. ແຂວງ ຫລວງນໍ້າ: ຊຸມຊົນ ມີ 03 ຄົນ (ເປັນຄົນຈີນ), ລັກລອບເຂົ້າມາ ສາມ ລ່ຽມຄຳ ໃນຕົ້ນ ປີ 2021; ແລະ ປີ 2020.

11. ບໍລິຄຳໄຊ: 1 ຄົນ; ມູນເບື້ອງຕົ້ນຂອງແຂວງບໍລິຄຳໄຊ ລາຍງານຕິດເຊື້ອໃນຊຸມຊົນ ມີ 01 ກໍລະນີ (ເປັນເພດຍິງ, ອາຍຸ 43 ປີ, ບ້ານທົ່ງນ້ອຍ, ເມືອງປາກຊັນ) ແລະ ຜູ້ກ່ຽວໄດ້ ມາເຝົ້າພໍ່ບໍ່ສະບາຍ ຢູ່ໂຮງໝໍມິດຕະພາບ ແລະ ຍັງບໍ່ຮູ້ແຫລ່ງທີ່ມາຂອງການຕິດເຊື້ອ

12. ອັດຕະປື 1 ຄົນ, ຊຸມຊົນ ຊຶ່ງມີປະຫວັດ ເດີນທາງ ມານະຄອນປາກເຊ ໃນຊ່ວງທີ 13/9/202;

- ປະຈຸບັນຜູ້ກ່ຽວໃດ້ມີອາການໄຂ້ຫວັດ, ດັງບໍ່ໄດ້ຮັບກິ່ນ, ລີ້ນບໍ່ໄດ້ຮັບລົດຊາດ.

**ສ່ວນລາຍລະອຽດກໍາລັງເກັບກໍາຂໍ້ມູນ ແລະ ຈະແຈ້ງໃຫ້ຊາບພາຍຫຼັງ**

- ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວຢູ່ສະຖານທີ່ປິ່ນປົວທີ່ຖືກກໍານົດໄວ້.

- ມາຮອດມື້ນີ້ ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ **19,952 ຄົນ**, ເສຍຊີວິດສະສົມ **16** ຄົນ ແລະ ຄົນເຈັບກໍາລັງປິ່ນປົວ ທັງໝົດ **4,768** ຄົນ.

- **ບ້ານໃໝ່ທີ່ການົດເປັນເຂດແດງ ໃນນະຄອນຫຼວງວຽງຈັນ ມີ 10 ບ້ານ ຈາກ 4 ເມືອງ:**

  - ເມືອງນາຊາຍທອງ: ບ້ານ ນາລຽນ
  - ເມືອງຈັນທະບູລີ: ບ້ານ ດອນແດງ ແລະ ສີດໍາດວນ
  - ເມືອງໄຊທານີ: ບ້ານ ທ່າງ່ອນ ແລະ ບ້ານ ໂພນຄໍ້

- ເມືອງ ສີໂຄດຕະບອງ: ບ້ານ ຈັນສະຫວ່າງ, ບ້ານຍາພະ, ບ້ານດົງນາໂຊກເໜືອ, ບ້ານໂນນຂີ້ເຫຼັກ ແລະ ບ້ານ ໂພນສະຫວາດ

- **ຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19** ສໍາລັບ **ນະຄອນຫຼວງວຽງຈັນ ແມ່ນມີ 1) ຈຸດເກັບຕົວຢ່າງ ເດີ່ນກິລາໃນຮົ່ມ ບຶງຂະຫຍອງ, 2)** ຈຸດເກັບຕົວຢ່າງ **ໂຮງຮຽນ ມສ ລາວ-ຫວຽດ ເມືອງໄຊເສດຖາ. 3) ຈຸດເກັບຕົວຢ່າງ ມສ ເຈົ້າອະນຸວົງ, 4) ຈຸດເກັບຕົວຢ່າງ ມສ ສີໂຄດ, 5) ຈຸດເກັບຕົວຢ່າງ ມສ ຕານມີໄຊ, 6) ໂຮງໝໍເມືອງນາຊາຍທອງ** ເຊິ່ງທັງ **6** ບ່ອນເປີດໃຫ້ບໍລິການບັນດາທ່ານທຸກວັນ (ວັນຈັນ ຫາ ວັນອາທິດ) ແລະ ຍັງມີທີມງານເກັບຕົວຢ່າງເຄື່ອນທີ່ໄປເກັບໃນສະຖານທີ່ທີ່ມີການລາຍງານຄົນຕິດເຊື້ອ.

- **ສະຖານທີ່ຈຳກັດບໍລິເວນກະກຽມຮອງຮັບຜູ້ສຳຜັດໃກ້ຊິດກັບກໍລະນີຕິດເຊື້ອ ປະກອບມີ ສູນຫຼັກ 27, ມສ ສີໂຄດຕະບອງ, ມສ ນາຄວາຍ, ມັດທະຍົມຕອນປາຍ ຈັນທະບູລີ, ມສ ດອນໜູນ, ມສ ດອນສະຫວ່າງ, ມສ ປາກຕອນ, ໂຮງຮຽນນາຍສິບ**
- ສຳລັບແຂວງ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼື ສະຖານທີ່ທີ່ກຳນົດໄວ້ ຫຼື ທີມງານໜ່ວຍເຄື່ອນທີ່ ທີ່ລົງເກັບຕົວຢ່າງ ໃນເຂດທີ່ມີການລະບາດໃນຊຸມຊົນ.
- ການສັກວັກຊີນ ແມ່ນໄດ້ສືບຕໍ່ໃຫ້ບໍລິການ ຈຸດທີ 1 ຢູ່ ສູນການຄ້າລາວໄອເຕັກ, 2) ຢູ່ວັດຈີນ ບ້ານດົງປາແລບ, 3) ໂຮງໝໍເມືອງ 9 ຕົວເມືອງ

➢ **ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ**

- ວັນທີ 21 ກັນຍາ 2021 ມີຜູ້ເດີນທາງເຂົ້າຕາມດ່ານຕ່າງໆໃນ ສປປ ລາວ ຈຳນວນ ທັງໝົດ **1,808** ຄົນ.
- ປັດຈຸບັນ ທົ່ວປະເທດມີສູນຈຳກັດບໍລິເວນທີ່ຍັງເປີດຢູ່ **116** ສູນ ແລະ **55** ໂຮງແຮມ, ມີຜູ້ຈຳກັດບໍລິເວນ **6,994** ຄົນ.

➢ **ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ:**

- ປັດຈຸບັນ ທົ່ວໂລກມີລາຍງານຜູ້ຕິດເຊື້ອສະສົມທັງໝົດ 230,260,168 (441,140 ໃໝ່), ເສຍຊີວິດທັງໝົດ 4,721,480 (8,019 ໃໝ່), ປິ່ນປົວຫາຍດີ 206,977,727 (488,462 ໃໝ່). ສຳລັບ 3 ອັນດັບ ປະເທດທີ່ມີຜູ້ຕິດເຊື້ອ

ແລະ ເສຍຊີວິດຫຼາຍກວ່າໝູ່ໃນໂລກ ກໍ່ຍັງແມ່ນ **ສະຫະລັດອາເມລິກາ, ອິນເດຍ** ແລະ **ບຣາຊິວ.**

- **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ**

ປະເທດທີ່ລາຍງານຜູ້ຕິດເຊື້ອຫຼາຍກ່ວາໝູ່ແມ່ນ **ສສ ຫວຽດນາມ** ມີລາຍງານຜູ້ຕິດເຊື້ອໃໝ່ **11,692** ຄົນ ແລະ ເສຍຊີວິດໃນມື້ດຽວ **240** ຄົນ, ຮອງລົງມາແມ່ນ **ປະເທດໄທ** ເຊິ່ງມີຜູ້ຕິດເຊື້ອໃໝ່ **10,919** ຄົນ ແລະ ເສຍຊີວິດໃນມື້ດຽວ **143** ຄົນ.

➢ **ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ**

- ການລອັກດາວ ປິດເມືອງ ອາດຈະສ້າງຄວາມບໍ່ສະດວກ ໃຫ້ແກ່ບັນດາທ່ານ ແຕ່ມີຄວາມຈຳເປັນ ແລະ ສຳຄັນຫຼາຍ ໃນການຫຼຸດຜ່ອນ ການແຜ່ລາມ ຂອງເຊື້ອພະຍາດອອກໄປສູ່ວົງກ້ວາງ ພ້ອມດຽວກັນນັ້ນ ທີມງານພາກສະໜາມຈະຕ້ອງ ໄດ້ກະກຽມຄວາມພ້ອມໃນການທີ່ຈະຮັບມື ເພື່ອ ບໍລິການ ແລະ ປິ່ນປົວ ຜູ້ຕິດເຊື້ອ.
- ດັ່ງທີ່ພວກເຮົາຮັບຮູ້ນຳກັນແລ້ວວ່າ ພະຍາດໄດ້ມີການພັດທະນາ ແລະ ປັບປ່ຽນພັນທຸກຳເຮັດໃຫ້ສາມາດຕິດຕໍ່ໄດ້ໄວ ແລະ ງ່າຍ ຈາກຄົນນຶ່ງໄປສູ່ກຸ່ມຄົນ ແຕ່ວ່າ ວິທີປ້ອງກັນ ທີ່ດີທີ່ສຸດ ແມ່ນຍັງຕ້ອງການໃຫ້ທ່ານປະຕິບັດຄືເກົ່າ ເຊັ່ນ: ບໍ່ໂຮມຊຸມນຸມກັນ, ບໍ່ຊຸມແຊວກັນເປັນກຸ່ມ, ຫຼີກເວັ້ນການເດີນທາງໄປສະຖານທີ່ສ່ຽງ, ສະຖານທີ່ແອອັດ, ການຮັກສາໄລຍະຫ່າງ, ໃສ່ຜ້າປິດປາກ-ດັງ, ລ້າງມືເລື້ອຍໆດ້ວຍນ້ຳສະອາດໃສ່ສະບູ ຫຼື ເຈວລ້າງມືທີ່ມີທາດ

ເຫຼົ້າ 70% ຂຶ້ນໄປ, ຮັກສາມາລະຍາດໃນການໄອ-ຈາມ, ອະນາໄມຂ້າເຊື້ອຈຸດທີ່ມີຄວາມສ່ຽງຕ່າງໆ ແລະ ອີກຢ່າງນຶ່ງທີ່ສຳຄັນ ກໍ່ຄື ການໄປຮັບວັກຊີນ ເພື່ອສ້າງພູມຄຸ້ມກັນໝູ່ ເຊິ່ງສາມາດປ້ອງການຄວາມຮຸນແຮງຂອງພະຍາດ ແລະ ການເສຍຊີວິດໄດ້ ຖ້າຫາກມີການຕິດເຊື້ອ. ໃນຂະນະດຽວກັນ ການບໍ່ອອກຈາກບ້ານກໍ່ສາມາດປ້ອງກັນຕົນເອງ ປ້ອງກັນຄອບຄົວ ແລະ ປົກປ້ອງ ສັງຄົມ.

- ອີກເທື່ອນຶ່ງຖ້າທ່ານຮູ້ສຶກວ່າ ເປັນຜູ້ສຳພັດໃກ້ຊິດ ຫຼື ນອນຢູ່ໃນກຸ່ມສ່ຽງ ຕ້ອງຈຳກັດບໍລິເວນຕົນເອງທັນທີ ແລະ ຮີບຮ້ອນໄປກວດຊອກຫາເຊື້ອ, ເຖິງແມ່ນວ່າ ຜົນກວດຂອງທ່ານຈະເປັນລົບກໍ່ຕາມ ຍັງຈຳເປັນຕ້ອງໄດ້ສືບຕໍ່ຈຳກັດບໍລິເວນຕົນເອງ ຈົນຄົບກຳນົດ 14 ວັນ ຫຼື ຖ້າຫາກມີອາການຜິດປົກກະຕິ ເຊັ່ນ: ໄຂ້, ໄອ, ເຈັບຄໍ, ເຈັບໜ້າເອິກ, ນ້ຳມູກໄຫຼ,

ດັງບໍ່ໄດ້ກິ່ນ, ຫຼື ກິນອາຫານບໍ່ໄດ້ລົດຊາດ ໃຫ້ກັບມາກວດຄືນ ຫຼື ໂທປຶກສາສາຍດ່ວນ 165 – 166 ເພື່ອຂໍຄໍາແນະນາ;

**ມາຮອດນີ້ ການລາຍງານສະພາບພະຍາດ ໂຄວິດ-19 ປະຈໍາພຸດ ວັນທີ 22ກັນຍາ ປີ 2021 ຂອງຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້, ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານ ທີ່ໄດ້ຕິດຕາມຮັບຟັງ ແລະ ຮັບຊົມ.**

**(ຂໍຂອບໃຈ)**